ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ
ກອງເລຂາຄະນະກຳມະການປະສານງານ
ກອງທຶນໂລກຕ້ານເອດ, ວັນນະໂລກແລະໄຂ້ຍຸງ
ສປປ ລາວ

## ບົດບັນທຶກກອງປະຊຸມປຶກສາຫາລື

ເນື່ອງຈາກວ່າໄດ້ຮັບຄຳແນະນຳຈາກທີມງານກອງທຶນໂລກ ແລະ ປະທານຄະນະກຳມະການປະສານງານກອງທຶນໂລກ (CCM), ກອງປະຊຸມດ່ວນຂອງທີມງານວິຊາການຈຶ່ງໄດ້ຈັດຂຶ້ນໃນວັນສຸກ ທີ 28 ພຶດສະພາ 2021 ເວລາ 14:30 ຫາ 16:00 ທີ່ຫ້ອງປະຊຸມຊັ້ນ 2 ກະຊວງສາທາລະນະສຸກ (ຕຶກໃໝ່) ໂດຍການເປັນປະທານຂອງ ທ່ານ ຣສ. ດຣ. ພູທອນ ເມືອງປາກ, ປະທານອົງການກາແດງລາວ ທັງເປັນປະທານ CCM.

ກອງປະຊຸມຄັ້ງນີ້ໄດ້ມີຜູ້ເຂົ້າຮ່ວມຈາກຫຼາຍພາກສ່ວນເຊັ່ນ: ຕາງໜ້າກົມອາຫານ ແລະ ຢາ, ກົມປິ່ນປົວແລະຟື້ນຟູໜ້າທີ່ການ, ກົມຈັດຕັ້ງພະນັກງານ, ຕາງໜ້າສູນຕ້ານເອດແລະພຕພ, ສູນຄວບຄຸມວັນນະໂລກ, ສູນໄຂ້ຍຸງ, ແມ່ກາຝາກແລະແມງໄມ້, ສູນວິເຄາະແລະລະບາດວິທະຍາ ແລະ ກອງເລຂາ CCM, ລວມທັງໝົດ 14 ທ່ານ.

ໂດຍຜ່ານການຄົ້ນຄ້ວາປຶກສາຫາລືກັນໃນກອງປະຊຸມກ່ຽວການສະໜັບສະໜູນທຶນຈາກກອງທຶນໂລກ ເຂົ້າໃນວຽກງານການຕອບໂຕ້ຕໍ່ພະຍາດໂຄວິດ 19(C19RM) ໃຫ້ແກ່ ສປປ ລາວ ສາມາດສະລຸບຜົນຂອງກອງປະຊຸມໂດຍຫຍໍ້ດັ່ງລຸ່ມນີ້:

1. ຈຳນວນທຶນຈັດສັນສຳລັບ C19RM ໄດ້ແບ່ງອອກເປັນ 2 ບ້ວງຄື:
   1.1 ທຶນຈັດສັນໂດຍພື້ນຖານ(C19RM Base Allocation)
   1.2 ທຶນຈັດສັນເພີ່ມເຕີມ (C19RM Above Base Allocation)
2. ການຍື່ນບົດສະເໜີຂໍທຶນໂດຍພື້ນຖານ ແລະ ທຶນເພີ່ມເຕີມສາມາດຍື່ນໄດ້ 2 ຮູບແບບຄື:
   2.1 ການຍື່ນບົດສະເໜີຂໍທຶນແບບດ່ວນ (C19RM Fast-Track Funding Request);
   2.2 ການຍື່ນບົດສະເໜີຂໍທຶນແບບຄົບຊຸດ (C19RM Full Funding Request)
3. ບົດສະເໜີຂໍທຶນ C19RM ທຸກແບບ ຈະຕ້ອງໄດ້ຮັບການຮັບຮອງຈາກຄະນະກຳມະການ CCM ແລະ ຈາກຄະນະກຳມະການປະສານງານແຫ່ງຊາດເພື່ອຕອບໂຕ້ຕໍ່ພະຍາດ COVID-19.
4. ຜ່ານມາກອງທຶນໂລກໄດ້ໃຫ້ການສະໜັບສະໜູນອົກຊີເຈນ 5,200ບັ້ງ ແຕ່ໄດ້ຖືກນຳໃຊ້ຢູ່ຂັ້ນໂຮງໝໍ ຍັງບໍ່ທັນສົ່ງໄປໃຫ້ຂັ້ນທ້ອງຖິ່ນ.
5. ການຈັດຊື້ອຸປະກອນ ແລະ ຜະລິດຕະພັນຕ່າງໆ ຕ້ອງຈັດຊື້ຕາມການຮັບຮອງມາດຕະຖານຈາກອົງການອະນາໄມໂລກ (WHO) ເຊັ່ນ: Oxygen, Rapid Test, PPE Coverall ແລະ ອື່ນໆ ຕ້ອງອີງໃສ່ລາຍການຄວາມຕ້ອງການຂອງແຜນງານແຫ່ງຊາດ ແລະ ໃຫ້ເລັ່ງການອະນຸມັດໃນການຈັດຊື້ຜ່ານບົດສະເໜີຂໍທຶນ C19RM ແບບດ່ວນ.
6. ສະເໜີໃຫ້ພິຈາລະນາການຈັດຊື້ Rapid Test ເພີ່ມອີກຈຳນວນ 100,000 tests.
7. ການສະເໜີຂອງກົມປິ່ນປົວແລ ຟື້ນຟູໜ້າທີ່ການ ກ່ຽວກັບການຊື້ເຄື່ອງຜະລິດອົກຊີ (PSA Oxygen Generator Plant) ນັ້ນ, ທາງກອງປະຊຸມບໍ່ເຫັນດີໃຫ້ຈັດຊື້ແບບເຄື່ອງຜະລິດ, ແຕ່ຕົກລົງເຫັນດີໃຫ້ຈັດຊື້ບັ້ງອົກຊີສຳເລັດຮູບ (Portable Oxygen) 3,000 ບັ້ງ ເຊິ່ງສາມາດເອົາມານຳໃຊ້ໄດ້ເລີຍ ແລະ ການຈັດຊື້ແມ່ນໃຫ້ຊື້ຜ່ານທາງບໍລິສັດທີ່ທັນສະໄໝຢູ່ພາຍໃນນະຄອນຫຼວງວຽງຈັນ, ສະນັ້ນ ເຫັນດີໃຫ້ເອົາລາຍການຈັດຊື້ເຂົ້າໃນບ້ວງທຶນຈັດສັນໂດຍພື້ນຖານ

C19RM (ແບບດ່ວນ) ຈຳນວນ 1,000ບັ້ງ ແລະ ທຶນຈັດສັນເພີ່ມເຕີມ C19RM ຈຳນວນ 2,000ບັ້ງ. ຖ້າທຶນຍັງເຫຼືອຫຼາຍ ແມ່ນໃຫ້ປຶກສາຫາລືກັບໂຄງການອື່ນເພື່ອຈັດສັນໃຫ້ເໝາະສົມຕາມຄວາມຕ້ອງການຕົວຈິງ ແລະ ສອດຄ່ອງກັບແຜນງານແຫ່ງຊາດຂອງກະຊວງສາທາລະນະສຸກ. ຕາມການແນະນຳຂອງກົມອາຫານແລະຢາ ແມ່ນໃຫ້ຊື້ພຽງແຕ່ບັ້ງອົກຊີ 3,000ບັ້ງ ແລ້ວເອົາໄປເກັບໄວ້ໃນສາງຂອງໂຮງງານຜະລິດອົກຊີທີ່ສາມາດສະໜອງໃຫ້ແກ່ໂຮງໝໍ 5 ແຫ່ງ ໃນນະຄອນຫຼວງວຽງຈັນ ແລະ ໃຫ້ເຮັດສັນຍາການບໍລິການ ແລະ ການຄຸ້ມຄອງໄວ້ຢ່າງລະອຽດ. ກອງປະຊຸມເຫັນວ່າການແນະນຳດັ່ງກ່າວມີເຫດຜົນພຽງພໍ ແລະ ຄວນໄດ້ຮັບການພິຈາລະນາ.

8. ພິຈາລະນາການສະເໜີກ່ຽວກັບເຄື່ອງກວດ Gene-Xpert C-19 ແລະ PPE Gowns ເນື່ອງຈາກວ່າມີຄວາມຈຳເປັນໃນການນຳໃຊ້ຫຼາຍ ແລະ ຄວນເອົາເຂົ້າໃນລາຍການຈັດຊື້ຜ່ານບົດສະເໜີຂໍທຶນ C19RM ແບບດ່ວນ, ແຕ່ສຳລັບການຈັດຊື້ຖົງໃສ່ສົບຄົນຕາຍແມ່ນໃຫ້ສົມທົບຕື່ມກັບກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ.
9. ສຳລັບບັນຫາກ່ຽວກັບອົງການຈັດຕັ້ງທາງສັງຄົມ (CSO) ທີ່ບໍ່ໄດ້ຮັບເຄື່ອງ PPE ນັ້ນ, ກົມອາຫານ ແລະ ຢາ ໄດ້ໃຫ້ຄວາມກະຈ່າງແຈ້ງວ່າ: ການຈັດສົ່ງແຈກຢາຍຜະລິດຕະພັນດ້ານສາທາລະນະສຸກແຕ່ຂັ້ນສູນກາງຫາຂັ້ນສຸກສາລາປະກອບມີ 12 ຄັ້ງ, ຂັ້ນສຸກສາລາໄດ້ຮັບຄັ້ງທີ່ 2 ຫາ ຄັ້ງທີ່ 11, ສ່ວນຄັ້ງທີ່ 12 ແມ່ນບໍ່ໄດ້ຈັດສົ່ງໃຫ້ ເນື່ອງຈາກວ່າຜະລິດຕະພັນດັ່ງກ່າວຍັງມີໃນສາງຢູ່. ຕາມລະບຽບການແລ້ວ CSO ຂັ້ນແຂວງ ຖ້າວ່າຜະລິດຕະພັນດັ່ງກ່າວຂາດສາງ ຕ້ອງເຮັດໃບສະເໜີເຖິງພະແນກອາຫານ ແລະ ຢາ ຂັ້ນແຂວງ ແຕ່ຄວາມຈິງແລ້ວບໍ່ໄດ້ມີການສະເໜີໃດໆ ແລະ ກໍ່ມີຄວາມເຂົ້າໃຈຜິດເລັກນ້ອຍ ເຊິ່ງຄວາມຕ້ອງການດັ່ງກ່າວນັ້ນ ບໍ່ຖືກຕາມຄູ່ມືການນຳໃຊ້ທີ່ຄົນເຈັບຕິດເຊື້ອເອດຈະນຳໃຊ້ຊຸດ PPE. ຄວາມຈິງແລ້ວແມ່ນມີຄວາມຕ້ອງການພຽງແຕ່ເຈວລ້າງມື ແລະ ໜ້າກາກອະນາໄມ ເພື່ອນຳໃຊ້ໃນຊ່ວງການລະບາດຂອງພະຍາດໂຄວິດ19. ກ່ຽວກັບບັນຫາດັ່ງກ່າວ ກອງປະຊຸມໄດ້ຕົກລົງເຫັນດີໃຫ້ CSO ເຮັດບົດສະເໜີຂໍເປັນໄຕມາດ ຍື່ນມາຕາມຂັ້ນຕອນ ແລະ ຕ້ອງລະບຸລາຍລະອຽດຂອງເປົ້າໝາຍ ແລະ ຂອບເຂດການນຳໃຊ້ ລວມທັງການລາຍງານການນຳໃຊ້ຜ່ານມາໃຫ້ລະອຽດ ແລະ ສັດເຈນ.
10. ໃຫ້ໂຄງການສາມພະຍາດໂດຍສະເພາະແມ່ນ ສູນໄຂ້ຍຸງ, ແມ່ກາຝາກແລະແມງໄມ້ ກະກຽມແຜນຂໍທຶນຮ່ວມກັນ ແລະໃຫ້ສົມທົບກັບກົມປິ່ນປົວແລະຟື້ນຟູໜ້າທີ່ການ ເພື່ອພິຈາລະນາເອົາວຽກງານທີ່ດ່ວນທີ່ສຸດເຂົ້າໃນບົດສະເໜີຂໍທຶນ C19RM ແບບດ່ວນ ແລ້ວໃຫ້ຍື່ນພ້ອມກັນ.
11. ກອງປະຊຸມໄດ້ຕົກລົງເລື່ອນວັນທີຍື່ນບົດສະເໜີຂໍທຶນ C19RM ແບບດ່ວນ ຈາກວັນທີ 31 ພຶດສະພາ 2021 ເພື່ອໄປຍື່ນພ້ອມກັນກັບບົດສະເໜີຂໍທຶນ C19RM ແບບຄົບຊຸດ ພາຍໃນວັນທີ 21 ມິຖຸນາ 2021 ເພື່ອກວດກາຄືນຕື່ມ ແລະດັດແກ້ບົດສະເໜີຂໍທຶນດັ່ງກ່າວແລ້ວສົ່ງໃຫ້ຄະນະກຳມະການ CCM ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ແລະ ໃຫ້ຈັດກອງປະຊຸມ CCM ວັນທີ 18 ມິຖຸນາ 2021 ເພື່ອພິຈາລະນາ ແລະ ຮັບຮອງເອົາບົດສະເໜີຂໍທຶນດັ່ງກ່າວ. ຫຼັງຈາກນັ້ນ, ທັງຮ່າງບົດສະເໜີຂໍທຶນ C19RM ແບບດ່ວນ ແລະ ແບບຄົບຊຸດ ຈະຕ້ອງໄດ້ສົ່ງໃຫ້ກອງທຶນໂລກວັນທີ 21 ມິຖຸນາ 2021.

ກອງປະຊຸມຄັ້ງນີ້ ໄດ້ສຳເລັດໃນເວລາ 16:00 ແລະ ໄດ້ບັນລຸຕາມຈຸດປະສົງທີ່ວາງໄວ້.

ນະຄອນຫຼວງວຽງຈັນ, ວັນທີ 08 ມິຖຸນາ 2021

**ປະທານກອງປະຊຸມ**

ທ່ານ ຮສ. ດຣ. ພູທອນເມືອງປາກ
ປະທານອົງການກາແດງລາວ,
ປະທານຄະນະກຳມະການປະສານງານກອງທຶນໂລກ

**ຜູ້ສັງລວມເນື້ອໃນກອງປະຊຸມ**

ທ່ານ ບຸດສາລີລັດຕະນະ
ຜູ້ປະສານງານ ແລະ ການເງິນ
ກອງເລຂາຄະນະກຳມະການປະສານງານກອງທຶນໂລກ